ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ທະນາຄານແຫ່ງ ສປປ ລາວ

ເລກທີ 109 /ທຫລ

ນະຄອນຫຼວງວຽງຈັນ, ວັນທີ 01 ກຸມພາ 2019

# ຂໍ້ຕົກລົງ

# ວ່າດ້ວຍການ ຊື້-ຂາຍ ເງິນຕາ ກັບມວນຊົນ

# ຂອງທະນາຄານທຸລະກິດ ແລະ ຮ້ານແລກປ່ຽນເງິນຕາ

- ອີງຕາມກົດໝາຍວ່າດ້ວຍທະນາຄານແຫ່ງ ສປປ ລາວ (ສະບັບປັບປຸງ) ສະບັບເລກທີ 47/ສພຊ, ລົງວັນທີ 19 ມິຖຸນາ 2018;
- ອີງຕາມກົດໝາຍວ່າດ້ວຍການຄຸ້ມຄອງເງິນຕາຕ່າງປະເທດ ສະບັບເລກທີ 55/ສພຊ, ລົງວັນທີ 22 ທັນວາ 2014;
- ອີງຕາມການຄົ້ນຄວ້າ ແລະ ນຳສະເໜີ ຂອງກົມນະໂຍບາຍເງິນຕາ.

**ຜູ້ວ່າການທະນາຄານແຫ່ງ ສປປ ລາວ ອອກຂໍ້ຕົກລົງ:**

## ໝວດທີ 1
## ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ**

ຂໍ້ຕົກລົງສະບັບນີ້ ວາງອອກເພື່ອຜັນຂະຫຍາຍບາງມາດຕາ ຂອງກົດໝາຍວ່າດ້ວຍການຄຸ້ມຄອງເງິນຕາຕ່າງປະເທດ ເພື່ອຄຸ້ມຄອງການດຳເນີນທຸລະກຳແລກປ່ຽນເງິນຕາ ກັບມວນຊົນ ຂອງທະນາຄານທຸລະກິດ ແລະ ຮ້ານແລກປ່ຽນເງິນຕາ ໃຫ້ສອດຄ່ອງຕາມກົດໝາຍ ແລະ ລະບຽບການ ແນໃສ່ອຳນວຍຄວາມສະດວກໃນການສະໜອງເງິນຕາຕ່າງປະເທດໃຫ້ແກ່ສັງຄົມ ແລະ ປະກອບສ່ວນໃນການຮັກສາສະຖຽນລະພາບເງິນຕາແຫ່ງຊາດ.

**ມາດຕາ 2 ການຊື້-ຂາຍ ເງິນຕາ ກັບມວນຊົນ**

ການຊື້-ຂາຍ ເງິນຕາ ກັບມວນຊົນ ແມ່ນການດຳເນີນທຸລະກຳແລກປ່ຽນເງິນຕາ ຈາກສະກຸນໜຶ່ງ ເປັນ ເງິນສະກຸນອື່ນ ຂອງທະນາຄານທຸລະກິດ ແລະ ຮ້ານແລກປ່ຽນເງິນຕາ ທີ່ບໍລິການໃຫ້ແກ່ມວນຊົນຢູ່ໃນສັງຄົມ.

**ມາດຕາ 3 ຂອບເຂດການນຳໃຊ້**

ຂໍ້ຕົກລົງສະບັບນີ້ ນຳໃຊ້ສຳລັບບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ, ທະນາຄານທຸລະກິດ ແລະ ຮ້ານແລກປ່ຽນເງິນຕາ ທີ່ດຳເນີນທຸລະກຳ ແລກປ່ຽນເງິນຕາ ຢູ່ ສປປ ລາວ.

## ໝວດທີ 2
## ການດຳເນີນການຊື້-ຂາຍ ເງິນຕາ ກັບມວນຊົນ

**ມາດຕາ 4 ການຊື້ເງິນຕາຕ່າງປະເທດ**

ທະນາຄານທຸລະກິດ ແລະ ຮ້ານແລກປ່ຽນເງິນຕາ ສາມາດຊື້ເງິນຕາຕ່າງປະເທດ ຈາກບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງທັງພາຍໃນ ແລະ ຕ່າງປະເທດ ທີ່ມີການເຄື່ອນໄຫວທຸລະກິດ ຫຼື ດຳເນີນທຸລະກຳໃດໜຶ່ງ ຢູ່ ສປປ ລາວ.

ຮ້ານແລກປ່ຽນເງິນຕາ ສາມາດຊື້ເງິນຕາຕ່າງປະເທດ ໄດ້ທັງໝົດ ໃນວົງເງິນບໍ່ເກີນທຶນຈົດທະບຽນຂອງຕົນ ຕໍ່ມື້ ເທົ່ານັ້ນ.

**ມາດຕາ 5 ການຂາຍເງິນຕາຕ່າງປະເທດ**

ທະນາຄານທຸລະກິດ ແລະ ຮ້ານແລກປ່ຽນເງິນຕາ ສາມາດຂາຍເງິນຕາຕ່າງປະເທດໃຫ້ບຸກຄົນ ໃນວົງເງິນບໍ່ເກີນທຽບເທົ່າ 10 ລ້ານກີບ ຕໍ່ຄົນ ຕໍ່ວັນ, ຊຶ່ງລູກຄ້າຕ້ອງລະບຸຈຸດປະສົງໃນການແລກປ່ຽນເງິນຕາຢ່າງຈະແຈ້ງ ພ້ອມທັງ ສຳເນົາບັດປະຈຳຕົວ (ສຳລັບຄົນລາວ) ຫຼື ໜັງສືຜ່ານແດນ (ສຳລັບຄົນຕ່າງປະເທດ) ໄວ້ເປັນຫຼັກຖານ; ຮ້ານແລກປ່ຽນເງິນຕາ ສາມາດຂາຍເງິນຕາຕ່າງປະເທດ ໄດ້ທັງໝົດໃນວົງເງິນບໍ່ເກີນທຶນຈົດທະບຽນຂອງຕົນ ຕໍ່ມື້ ເທົ່ານັ້ນ.

ທະນາຄານທຸລະກິດ ແລະ ຮ້ານແລກປ່ຽນເງິນຕາ ສາມາດຂາຍເງິນຕາຕ່າງປະເທດ ໃຫ້ນິຕິບຸກຄົນ ແລະ ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ທີ່ມີຈຸດປະສົງເພື່ອຊຳລະສະສາງກັບຕ່າງປະເທດ ໂດຍຕ້ອງພິຈາລະນາຂາຍໃຫ້ຜູ້ທີ່ມີເປົ້າໝາຍຊຳລະຄ່າສິນຄ້າບູລິມະສິດກ່ອນ ເປັນຕົ້ນ: ນ້ຳມັນເຊື້ອໄຟ, ຢາປົວພະຍາດ, ສິນຄ້າອຸປະໂພກ-ບໍລິໂພກທີ່ມີຄວາມຈຳເປັນ. ຈາກນັ້ນ ຈຶ່ງພິຈາລະນາຂາຍໃຫ້ລູກຄ້າທີ່ຕ້ອງການຊຳລະຄ່າສິນຄ້າອື່ນ (ປັດໃຈອື່ນ) ແລະ ບຸກຄົນ ຕາມທີ່ກຳນົດໄວ້ໃນວັກໜຶ່ງ ຂອງມາດຕານີ້ ຫຼື ຕາມເປົ້າໝາຍທີ່ກຳນົດໄວ້ໃນມາດຕາ 10 ຂອງກົດໝາຍວ່າດ້ວຍການຄຸ້ມຄອງເງິນຕາຕ່າງປະເທດ ດັ່ງນີ້:

1. ຊຳລະຄ່າສິນຄ້າທີ່ນຳເຂົ້າຈາກຕ່າງປະເທດ;
2. ຊຳລະຄ່າບໍລິການທີ່ຕິດພັນກັບສິນຄ້າ ຂາເຂົ້າ-ຂາອອກ ໂດຍກົງກັບຕ່າງປະເທດ ເຊັ່ນ: ຄ່າຂົນສົ່ງຜ່ານແດນ, ຄ່າປະກັນໄພ, ຄ່າຝາກສາງຜ່ານແດນ ແລະ ຄ່າບໍລິການອື່ນ;
3. ຊຳລະໜີ້ເງິນກູ້ ແລະ ສິນເຊື່ອການຄ້າ ກັບຕ່າງປະເທດ;
4. ໃຫ້ການຊ່ວຍເຫຼືອແກ່ຕ່າງປະເທດ ຕາມການຕົກລົງຂອງລັດຖະບານ;
5. ໂອນເງິນກຳໄລ, ເງິນປັນຜົນ, ຕົ້ນທຶນ, ດອກເບ້ຍ, ຄ່າບໍລິການອື່ນ ຂອງນັກລົງທຶນຕ່າງປະເທດ ແລະ ຄ່າແຮງງານຂອງຄົນຕ່າງປະເທດ ກັບຄືນປະເທດ ຫຼື ໄປປະເທດທີສາມ;
6. ໂອນເງິນໄປລົງທຶນຢູ່ຕ່າງປະເທດ;
7. ສຶກສາ, ທ່ອງທ່ຽວ, ຢ້ຽມຢາມ ແລະ ປິ່ນປົວສຸຂະພາບ ຢູ່ຕ່າງປະເທດ;

8. ປະຕິບັດເປົ້າໝາຍອື່ນ ຕາມລະບຽບການທີ່ທະນາຄານແຫ່ງ ສປປ ລາວ ວາງອອກ.

ການຂາຍເງິນຕາຕ່າງປະເທດທຸກຄັ້ງ ທະນາຄານທຸລະກິດ ແລະ ຮ້ານແລກປ່ຽນເງິນຕາ ຕ້ອງໃຫ້ລູກຄ້າປະກອບເອກະສານທີ່ກ່ຽວຂ້ອງຕາມແຕ່ລະເປົ້າໝາຍ ຢ່າງຖືກຕ້ອງ ແລະ ຄົບຖ້ວນ ເພື່ອສະເໜີຂໍຊື້ເງິນຕາຕ່າງປະເທດກັບທະນາຄານທຸລະກິດ ແລະ ຮ້ານແລກປ່ຽນເງິນຕາ.

ສໍາລັບເງິນຕາຕ່າງປະເທດ ທີ່ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ໄດ້ຈາກການຊື້ເງິນຕາຕ່າງປະເທດກັບທະນາຄານທຸລະກິດ ແລະ ຮ້ານແລກປ່ຽນເງິນຕາ ຕ້ອງໂອນເຂົ້າບັນຊີເງິນຝາກຂອງຕົນ ເພື່ອຊໍາລະສະສາງກັບຕ່າງປະເທດ ເທົ່ານັ້ນ.

**ມາດຕາ 6 ການກໍານົດ ແລະ ປະຕິບັດອັດຕາແລກປ່ຽນ**

ທະນາຄານທຸລະກິດ ແລະ ຮ້ານແລກປ່ຽນເງິນຕາ ຕ້ອງກໍານົດ ແລະ ປະຕິບັດອັດຕາແລກປ່ຽນ ໃນການຊື້-ຂາຍເງິນຕາກັບລູກຄ້າ ຢ່າງຖືກຕ້ອງ ແລະ ສອດຄ່ອງຕາມລະບຽບການທີ່ທະນາຄານແຫ່ງ ສປປ ລາວ ກໍານົດໃນແຕ່ລະໄລຍະ, ຊຶ່ງການຊື້-ຂາຍເງິນຕາ ລະຫວ່າງສະກຸນເງິນຕ່າງປະເທດດ້ວຍກັນແຕ່ລະຄັ້ງ ຕ້ອງຜ່ານສະກຸນເງິນກີບ ໂດຍການກໍານົດອັດຕາໄຂວ່ (ໂດລາ/ບາດ, ບາດ/ໂດລາ) ຕ້ອງໄດ້ມາຈາກການຫານໄຂວ່ຜ່ານສະກຸນເງິນກີບ/ໂດລາ, ກີບ/ບາດ ແລະ ສະກຸນອື່ນກໍເຊັ່ນດຽວກັນ ໂດຍຕ້ອງຢູ່ໃນຂອບທີ່ລະບຽບການໄດ້ກໍານົດ.

**ມາດຕາ 7 ການພິຈາລະນາ**

ທະນາຄານທຸລະກິດ ແລະ ຮ້ານແລກປ່ຽນເງິນຕາ ຕ້ອງໃຊ້ດຸນພິນິດ ໃນການພິຈາລະນາຊື້-ຂາຍເງິນຕາຕ່າງປະເທດ ບົນພື້ນຖານການຮອກຮູ້ລູກຄ້າຂອງຕົນ.

**ມາດຕາ 8 ການລາຍງານ**

ທະນາຄານທຸລະກິດ ແລະ ຮ້ານແລກປ່ຽນເງິນຕາ ຕ້ອງປະຕິບັດການລາຍງານຢ່າງເປັນປົກກະຕິ ໃຫ້ກົມນະໂຍບາຍເງິນຕາ ສໍາລັບຢູ່ນະຄອນຫຼວງວຽງຈັນ ແລະ ລາຍງານໃຫ້ ທະນາຄານແຫ່ງ ສປປ ລາວ ປະຈໍາພາກ ສໍາລັບຢູ່ຕ່າງແຂວງ ດັ່ງລາຍລະອຽດລຸ່ມນີ້:

1. ລາຍງານການກໍານົດອັດຕາແລກປ່ຽນ ແຕ່ລະສະກຸນເງິນຂອງຕົນ ຜ່ານລະບົບລາຍງານແບບເອເລັກໂຕຼນິກຂອງທະນາຄານແຫ່ງ ສປປ ລາວ ໃຫ້ກົມນະໂຍບາຍເງິນຕາ ຫຼື ລາຍງານຜ່ານແຟັກ ຫຼື ອີເມວ ໃຫ້ທະນາຄານແຫ່ງ ສປປ ລາວ ປະຈໍາພາກ ພາຍໃນເວລາ 08:15-15:00 ໂມງ ຂອງແຕ່ລະວັນ ແລະ ຕ້ອງລາຍງານການປັບອັດຕາແລກປ່ຽນໃຫ້ກົມນະໂຍບາຍເງິນຕາ ຫຼື ທະນາຄານແຫ່ງ ສປປ ລາວ ປະຈໍາພາກ ຊາບໃນທັນທີ ທີ່ມີການປັບປ່ຽນອັດຕາແລກປ່ຽນທຸກຄັ້ງ;
2. ລາຍງານການຊື້-ຂາຍເງິນຕາຜ່ານລະບົບລາຍງານແບບເອເລັກໂຕຼນິກຂອງທະນາຄານແຫ່ງ ສປປ ລາວ ໃຫ້ກົມນະໂຍບາຍເງິນຕາທຸກຄັ້ງໃນທັນທີ ທີ່ມີການຊື້-ຂາຍເງິນຕາ ແລະ ລາຍງານຜ່ານແຟັກ ຫຼື ອີເມວ ໃຫ້ທະນາຄານແຫ່ງ ສປປ ລາວ ປະຈໍາພາກ;
3. ການແລກປ່ຽນເງິນຕາ ທີ່ມີລັກສະນະສົງໄສ ຫຼື ການກະທໍາໃດໜຶ່ງທີ່ເປັນການປັ່ນປ່ວນລະບົບອັດຕາແລກປ່ຽນ ຕ້ອງລາຍງານໃຫ້ທະນາຄານແຫ່ງ ສປປ ລາວ ຊາບຢ່າງທັນການ;
4. ການແລກປ່ຽນເງິນຕາ ທີ່ມີລັກສະນະສົງໄສວ່າກ່ຽວຂ້ອງກັບການຟອກເງິນ ຫຼື ສະໜອງທຶນໃຫ້ແກ່

ການກໍ່ການຮ້າຍ ຕ້ອງລາຍງານໃຫ້ສຳນັກງານຂໍ້ມູນຕ້ານການຟອກເງິນ ຕາມກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ.

## ໝວດທີ 3
## ບົດບັນຍັດສຸດທ້າຍ

**ມາດຕາ 9 ການຈັດຕັ້ງປະຕິບັດ**

ກົມນະໂຍບາຍເງິນຕາ ແລະ ທະນາຄານແຫ່ງ ສປປ ລາວ ປະຈຳພາກ ມີໜ້າທີ່ຄຸ້ມຄອງ ແລະ ຕິດຕາມການຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້.

ທະນາຄານທຸລະກິດ ແລະ ຮ້ານແລກປ່ຽນເງິນຕາ ຕ້ອງອຳນວຍຄວາມສະດວກໃນການສະໜອງເງິນຕາໃຫ້ແກ່ມວນຊົນ ແລະ ປະຕິບັດຕາມຂໍ້ຕົກລົງສະບັບນີ້ ຢ່າງເຂັ້ມງວດ.

ບຸກຄົນ, ນິຕິບຸກຄົນ, ການຈັດຕັ້ງທັງພາຍໃນ ແລະ ຕ່າງປະເທດ ຕ້ອງໃຫ້ການຮ່ວມມື ແລະ ປະຕິບັດຕາມຂໍ້ຕົກລົງສະບັບນີ້ ຢ່າງເຂັ້ມງວດ.

**ມາດຕາ 10 ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ ແລະ ປ່ຽນແທນຂໍ້ຕົກລົງວ່າດ້ວຍການຂາຍເງິນຕາຕ່າງປະເທດ ໃຫ້ບຸກຄົນ ແລະ ນິຕິບຸກຄົນ ເພື່ອຊຳລະສະສາງກັບຕ່າງປະເທດ ສະບັບເລກທີ 1083/ທຫລ, ລົງວັນທີ 09 ທັນວາ 2016.

ຜູ້ວ່າການທະນາຄານແຫ່ງ ສປປ ລາວ

ສອນໄຊ ສິດພະໄຊ